ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 122/ນຍ

ນະຄອນຫຼວງວຽງຈັນ, ວັນທີ 21/04/ 2017

# ດຳລັດ

## ວ່າດ້ວຍອົງການຄຸ້ມຄອງ ແລະ ປົກປັກຮັກສາເຂດແຫຼ່ງນ້ຳ ນ້ຳເທີນ 2

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ສັນຍາສຳປະທານ ໂຄງການໄຟຟ້ານ້ຳຕົກ ນ້ຳເທີນ 2 ສະບັບລົງວັນທີ 03 ຕຸລາ 2002 ແລະ ການດັດແກ້ຫຼັງຈາກນັ້ນ;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0321/ກປ, ລົງວັນທີ 31 ມີນາ 2017.

## ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດທີເຮັດວຽກ ຂອງອົງການຄຸ້ມຄອງ ແລະ ປົກປັກຮັກສາເຂດແຫຼ່ງນ້ຳ ນ້ຳເທີນ2 ເພື່ອເປັນບ່ອນອີງດ້ານນິຕິກຳໃຫ້ອົງການດັ່ງກ່າວ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າສະຫງວນແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ເຂດແຫຼ່ງນ້ຳ ນ້ຳເທີນ 2 ໃຫ້ມີຄວາມອຸດົມສົມບູນ, ຍືນຍົງ ແລະ ກາຍເປັນອຸທິຍານແຫ່ງຊາດ ແນໃສ່ປົກປັກຮັກສາສິ່ງແວດລ້ອມ ແລະ ແຫຼ່ງນ້ຳ ແລະ ປ້ອງກັນການເຊາະເຈື່ອນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ເຂດແຫຼ່ງນ້ຳ ນ້ຳເທີນ 2**

ເຂດແຫຼ່ງນ້ຳ ນ້ຳເທີນ2 ແມ່ນເນື້ອທີ່ ເຂດປ່າສະຫງວນແຫ່ງຊາດ ນາກາຍ-ນ້ຳເທີນ, ເຂດເຊື່ອມຕໍ່ກັບເຂດປ່າສະຫງວນແຫ່ງຊາດພູຫີນປູນທາງທິດເໜືອ ແລະ ເຂດປ່າສະຫງວນແຫ່ງຊາດພູຫີນໜາມໜໍ່ທາງທິດໃຕ້.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ອົງການ** ໝາຍເຖິງ ອົງການຄຸ້ມຄອງ ແລະ ປົກປັກຮັກສາ ແຫຼ່ງນ້ຳ ນ້ຳເທີນ 2 ທີ່ໄດ້ຮັບການສ້າງຕັ້ງຂຶ້ນຕາມດຳລັດ ສະບັບເລກທີ 25/ນຍ, ລົງວັນທີ 26 ກຸມພາ 2011;

2. **ສັນຍາສຳປະທານ** ໝາຍເຖິງ ບັນດາຂໍ້ກົກລົງ ແລະເງື່ອນໄຂຕ່າງໆຂອງການໃຫ້ສຳປະທານ ແກ່ກຸ່ມຜູ້ລົງທຶນ ເພື່ອພັດທະນາ, ຖືກຳມະສິດ ແລະດຳເນີນກິດຈະການ ໂຄງການເຂື່ອນໄຟຟ້ານ້ຳຕົກ ນ້ຳເທີນ 2 ໂດຍລັດຖະບານແຫ່ງ ສປປ ລາວ ຕາມເງື່ອນໄຂຂອງສັນຍາທີ່ມີຜົນສັກສິດ ແລະ ຖືກຮັບຮອງໂດຍມະຕິຕົກລົງ ຂອງສະພາແຫ່ງຊາດແຫ່ງ ສປປ ລາວ ສະບັບເລກທີ 76/ສພຊ, ລົງວັນທີ 12 ຕຸລາ 2002;

3. **ປ່າສະຫງວນແຫ່ງຊາດນາກາຍ-ນ້ຳເທີນ** ໝາຍເຖິງ ປ່າສະຫງວນທີ່ສ້າງຕັ້ງຂຶ້ນ ຕາມດຳລັດສະບັບເລກທີ 164/ນຍ, ລົງວັນທີ 29 ຕຸລາ 1993 ວ່າດ້ວຍການສ້າງຕັ້ງເຂດປ່າສະຫງວນແຫ່ງຊາດ ແລະ ໄດ້ກຳນົດລະອຽດ ເພີ່ມເຕີມໃນມາດຕາ 3 ຂອງດຳລັດ ສະບັບເລກທີ 193/ນຍ, ລົງວັນທີ 29 ທັນວາ 2000 ວ່າດ້ວຍການສ້າງຕັ້ງເຂດເນື້ອທີ່ປ່າສະຫງວນນາກາຍ-ນ້ຳເທີນ, ເຂດເນື້ອທີ່ເຊື່ອມຕໍ່, ເຂດເນື້ອທີ່ອ່າງເກັບນ້ຳໂຄງການນ້ຳເທີນ 2, ເຂດເນື້ອທີ່ຍົກຍ້າຍຈັດສັນ ແລະ ເຂດປ່າໄມ້ ສຳລັບປະຊາຊົນທີ່ຖືກຜົນກະທົບ ຈາກໂຄງການນ້ຳເທີນ 2;

4. **ເຂດອະນຸລັກພິເສດ** ໝາຍເຖິງ ເນື້ອທີ່ສ່ວນໜຶ່ງຂອງອ່າງເກັບນ້ຳ ທີ່ນອນໃນເຂດພື້ນທີ່ແຫຼ່ງນ້ຳ ນ້ຳເທີນ 2, ຮ່ອມຫ້ວຍ ຫຼື ໂກນຫ້ວຍ ແລະ ຮ່ອມພູ ທີ່ເກີດຂຶ້ນຢູ່ໃນບໍລິເວນຍອດຫ້ວຍ ທາງດ້ານເໜືອ ແລະ ດ້ານໃຕ້ ຂອງອ່າງເກັບນ້ຳ, ທິດຕາເວັນອອກສ່ຽງເໜືອ ຊາຍແດນທີ່ຕິດກັບເຂດຍົກຍ້າຍຈັດສັນ, ບັນດາໝູ່ເກາະ, ໝູ່ດອນຢູ່ທາງເບື້ອງຕາເວັນອອກສ່ຽງເໜືອ ລະຫວ່າງ ເຂດເຊື່ອມຕໍ່ ປ່າສະຫງວນແຫ່ງຊາດນາກາຍ-ນ້ຳເທີນ ແລະ ປ່າສະຫງວນ ແຫ່ງຊາດພູຫີນປູນ;

5. **ເຂດເຊື່ອມຕໍ່ທາງທິດເໜືອ** ໝາຍເຖິງ ເຂດເຊື່ອມຕໍ່ ລະຫວ່າງ ເຂດປ່າສະຫງວນແຫ່ງຊາດນາກາຍ-ນ້ຳເທີນ ແລະ ເຂດປ່າສະຫງວນແຫ່ງຊາດພູຫີນປູນ ມີເນື້ອທີ່ ເຈັດສິບເອັດພັນສອງຮ້ອຍຫົກສິບເຮັກຕາ ຕາມທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດ ສະບັບເລກທີ 193/ນຍ, ລົງວັນທີ 29 ທັນວາ 2000;

6. **ເຂດເຊື່ອມຕໍ່ທາງທິດໃຕ້** ໝາຍເຖິງ ເຂດເຊື່ອມຕໍ່ ລະຫວ່າງເຂດປ່າສະຫງວນແຫ່ງຊາດນາກາຍ-ນ້ຳເທີນ ແລະ ເຂດປ່າສະຫງວນແຫ່ງຊາດພູຫີນໝາມໝໍ່ ມີເນື້ອທີ່ ສາມພັນສາມຮ້ອຍສິບ ເຮັກຕາ ຕາມທີ່ກຳນົດໄວ້ໃນມາດຕາ 5 ຂອງດຳລັດ ສະບັບເລກທີ 193/ນຍ, ລົງວັນທີ 29 ທັນວາ 2000;

7. **ເຂດອ້ອມຂ້າງ ຫຼື ເຂດໃກ້ຄຽງ** ໝາຍເຖິງ ເຂດອ້ອມຂ້າງເຂດແຫຼ່ງນ້ຳ ນ້ຳເທີນ 2 ທີ່ປະຊາຊົນບັນດາເຜົ່າອາໄສຢູ່ພາຍໃນ ບັນດາບ້ານທີ່ຂຶ້ນກັບ ເມືອງນາກາຍ, ເມືອງຍົມມະລາດ ແລະ ເມືອງບົວລະພາ ແຂວງຄຳມ່ວນ, ເມືອງຄຳເກີດ ແຂວງບໍລິຄຳໄຊ ທີ່ເຂົ້າມາມີສ່ວນຮ່ວມ ແລະ ມີຜົນປະໂຫຍດຈາກການຈັດຕັ້ງປະຕິບັດ ບັນດາກິດຈະກຳຕ່າງໆ ໃນແຜນດຳເນີນງານຂອງອົງການ;

8. **ແຜນແມ່ບົດ ແລະ ແຜນດຳເນີນງານໃນການຄຸ້ມຄອງສິ່ງແວດລ້ອມ ແລະສັງຄົມ** ໝາຍເຖິງ ແຜນ ການຄຸ້ມຄອງສັງຄົມ ແລະສິ່ງແວດລ້ອມ ເພື່ອພັດທະນາ ແລະຄຸ້ມຄອງພື້ນທີ່ແຫຼ່ງນ້ຳ ນ້ຳເທີນ 2 ຊຶ່ງຖືກຮັບຮອງໂດຍສະພາບໍລິຫານຂອງອົງການດັ່ງກ່າວ ເພື່ອໃຫ້ບັນລຸເປົ້າໝາຍ:

ກ). ສະໜອງຂໍ້ມູນຂ່າວສານ ເພື່ອຮັບຮູ້ ແລະເຂົ້າໃຈ ສາຍພົວພັນລະຫວ່າງ ພື້ນທີ່ແຫຼ່ງນ້ຳ ນ້ຳເທີນ 2, ຊັບພະຍາກອນທຳມະຊາດ, ຄວາມອຸດົມສົມບູນທາງດ້ານຊີວະນາໆພັນ, ສິ່ງແວດລ້ອມ ແລະ ປະຊາຊົນບັນດາເຜົ່າ, ລວມທັງຜູ້ທີ່ບໍ່ມີຄວາມສາມາດເພິ່ງຕົນເອງ ທີ່ອາໄສຢູ່ໃນເຂດດັ່ງກ່າວ;

ຂ). ກຳນົດເປົ້າໝາຍການອະນຸລັກ, ການຄຸ້ມຄອງ, ການພັດທະນາ ໂດຍກຳນົດຕົວຊີ້ວັດທີ່ສາມາດວັດແທກ ແລະ ກວດສອບໄດ້;

ຄ). ກຳນົດແບ່ງເຂດ ພາຍໃນພື້ນທີ່ແຫຼ່ງນ້ຳ ນ້ຳເທີນ 2 ເພື່ອບັນລຸຈຸດປະສົງທີ່ຕັ້ງໄວ້ ແລະ ພັດທະນາພື້ນຖານວັດຖຸທີ່ແຕ່ລະເຂດກຳນົດໄວ້;

ງ). ກຳນົດຍຸດທະສາດ ເພື່ອບັນລຸຈຸດປະສົງທີ່ຕັ້ງໄວ້.

9. ບ້ານທີ່ນອນຢູ່ໃນເຂດແຫຼ່ງນ້ຳ ນ້ຳເທີນ 2 ໝາຍເຖິງ ເຂດທີ່ຢູ່ອາໄສຂອງຊາວບ້ານ ທີ່ໄດ້ຮັບສິດນຳໃຊ້ປ່າສະຫງວນ ຕາມທີ່ໄດ້ກຳນົດໄວ້ໃນ ດຳລັດວ່າປ່າສະຫງວນ ເລກທີ 134/ລບ, ລົງວັນທີ 13 ພຶດສະພາ 2015;

10. **ກອງທຶນ** ໝາຍເຖິງ ງົບປະມານຂອງອົງການ ທີ່ໄດ້ຈາກການປະກອບສ່ວນຂອງບໍລິສັດໄຟຟ້ານ້ຳເທີນ 2 ພາຍໃຕ້ສັນຍາສຳປະທານ ແລະການຊ່ວຍເຫຼືອດ້ານທຶນຮອນ ຫຼື ວິຊາການທີ່ອົງການສາມາດຮັບໄດ້.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 4 ທີ່ຕັ້ງ ແລະ ພາລະບົດບາດ**

ອົງການຄຸ້ມຄອງ ແລະ ປົກປັກຮັກສາເຂດແຫຼ່ງນ້ຳ ນ້ຳເທີນ 2 ຂຽນເປັນຕົວອັກສອນຫຍໍ້ວ່າ **ອຄປ.ທ2** ແມ່ນການຈັດຕັ້ງໜຶ່ງ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຕາມດຳລັດ ສະບັບເລກທີ 25/ນຍ, ລົງວັນທີ 26 ກຸມພາ 2011 ມີພາລະບົດບາດ ເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເຂດແຫຼ່ງນ້ຳ ນ້ຳເທີນ 2 ໂດຍການຮ່ວມມື, ປະສານງານ ແລະ ດຳເນີນງານ ກັບພາກສ່ວນກ່ຽວຂ້ອງຢູ່ຂັ້ນສູນກາງ, ທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນ ຄູ່ຮ່ວມພັດທະນາ ໃນການວາງແຜນ ແລະ ຈັດຕັ້ງປະຕິບັດການຄຸ້ມຄອງ ເຂດແຫຼ່ງນ້ຳ ນ້ຳເທີນ 2 ພ້ອມທັງ ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານປັບປຸງຊີວິດການເປັນຢູ່ ແລະ ພັດທະນາຊົນນະບົດ ເພື່ອການອະນຸລັກ.

**ມາດຕາ 5 ໜ້າທີ່ຂອງອົງການ**

ອົງການ ຄຸ້ມຄອງ ແລະ ປົກປັກຮັກສາ ເຂດແຫຼ່ງນ້ຳ ນ້ຳເທີນ 2 ມີໜ້າທີ່ ຕົ້ນຕໍດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ ແລະ ມະຕິຂອງລັດຖະບານ;

2. ຄົ້ນຄວ້າ, ຫັນເອົາແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ມະຕິຕົກລົງ ຂອງລັດຖະບານ ກ່ຽວກັບ ວຽກງານການຄຸ້ມຄອງ ແລະ ປົກປັກຮັກສາ ປ່າສະຫງວນແຫ່ງຊາດນາກາຍ-ນ້ຳເທີນ ແລະ ເຂດແຫຼ່ງນ້ຳ ນ້ຳເທີນ 2 ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ;

3. ໃຫ້ຄຳເຫັນ ຕໍ່ທຸກພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານຢູ່ໃນເຂດອ້ອມຂ້າງ ແຫຼ່ງນ້ຳ ນ້ຳເທີນ 2 ທີ່ສ້າງຄວາມເສຍຫາຍ ຕໍ່ກັບສິ່ງແວດລ້ອມ;

4. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນຄຸ້ມຄອງ ແລະ ແຜນງານປະຈຳປີ ໃຫ້ສອດຄ່ອງກັບແຜນແມ່ບົດໂດຍການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ທັງສອດຄ່ອງກັບສັນຍາສຳປະທານ;

5. ສ້າງແຜນການ ແລະ ງົບປະມານ, ວັດຖຸຊັບສິນ ແລະ ເອກະສານ ຂອງອົງການ ປະຈຳປີ ໂດຍອີງຕາມແຜນຄຸ້ມຄອງ ແລະ ແຜນດຳເນີນງານຕ່າງໆ;

6. ປະສານ, ອຳນວຍຄວາມສະດວກ ແລະ ປະກອບທຶນ ຕາມຄວາມເໝາະສົມ ໃນການຈັດຕັ້ງປະຕິບັດແຜນດຳເນີນງານ ແລະ ແຜນການປະຈຳປີ ທີ່ພາກສ່ວນອື່ນນຳສະເໜີ;

7. ຮັບ, ຈ່າຍ ແລະ ລົງບັນຊີ ເງິນ ທີ່ບໍລິສັດໄຟຟ້ານ້ຳເທີນ 2 ແລະ ຜູ້ໃຫ້ການຊ່ວຍເຫຼືອອື່ນ ມອບໃຫ້ອົງການ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ຕາມຈຸດປະສົງ ຂອງອົງການ ອຄປ.ທ2;

8. ປະສານສົມທົບກັບ ບໍລິສັດໄຟຟ້ານ້ຳເທີນ 2 ແລະ ຄະນະກຳມະການຄຸ້ມຄອງອ່າງເກັບນ້ຳ ກ່ຽວກັບການຄຸ້ມຄອງນຳໃຊ້ນ້ຳ;

9. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດແຜນແມ່ບົດ, ແຜນຄຸ້ມຄອງ, ແຜນດຳເນີນງານ ແລະ ແຜນການງົບປະມານປະຈຳປີຂອງ ອຄປ.ທ2;

10. ຊຸກຍູ້ສົ່ງເສີມ ວຽກງານຄົ້ນຄວ້າທາງດ້ານວິທະຍາສາດ, ການສຳຫຼວດ ແລະ ການເກັບກຳຂໍ້ມູນ ໃນເຂດແຫຼ່ງນໍ້າ ນໍ້າເທີນ 2 ລວມທັງ ການທ່ອງທ່ຽວທາງດ້ານທຳມະຊາດ ປະຫວັດສາດ ແລະ ວັດທະນະທຳ;

11. ຮ່ວມມືກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ໃນການປະຕິບັດກົດໝາຍ ແລະ ລະບຽບການ ທີ່ອາດຈະສົ່ງຜົນກະທົບຕໍ່ກັບຈຸດປະສົງຂອງອົງການໃນເຂດແຫຼ່ງນໍ້າ ນໍ້າເທີນ 2 ລວມທັງ ເຂດອະນຸລັກພິເສດ ແລະ ເຂດອ້ອມຂ້າງ ໃນການປະຕິບັດໜ້າທີ່ກວດກາປ່າໄມ້, ທີ່ດິນປ່າໄມ້ ແລະ ການປະມົງ ໃນເຂດທີ່ຕົນຮັບຜິດຊອບ;

12. ອຳນວຍຄວາມສະດວກ ໃນການປັບປຸງ ຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າ ທີ່ອາໄສຢູ່ ໃນ ແລະອ້ອມຂ້າງ ເຂດແຫຼ່ງນໍ້າ ນໍ້າເທີນ 2 ລວມທັງຂອບເຂດບ້ານທີ່ຢູ່ໃນເຂດດັ່ງກ່າວ ເພື່ອຫຼຸດຜ່ອນຄວາມທຸກຍາກ ດ້ວຍການພັດທະນາແບບຍືນຍົງ ທີ່ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະຄຳໝັ້ນສັນຍາ ຂອງລັດຖະບານແຫ່ງ ສປປ ລາວ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ ກ່ຽວກັບໂຄງການນໍ້າເທີນ 2;

13. ສ້າງສັນຍາຮ່ວມມື ຫຼືສັນຍາຈ້າງ ບຸກຄົນ, ພາກສ່ວນອື່ນ ເປັນຕົ້ນ ຊຸ່ງວຊານ, ນັກວິທະຍາສາດ , ມະຫາວິທະຍາໄລ ແລະ ອົງການອະນຸລັກຕ່າງໆ ເພື່ອດຳເນີນການຄົ້ນຄ້ວາ, ການຈັດຕັ້ງປະຕິບັດກິດຈະກຳ, ກວດກາ, ປະເມີນຜົນ ຕາມແຜນການຄຸ້ມຄອງ ແລະ ແຜນດຳເນີນງານຂອງອົງການ;

14. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ຂອງຕົນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

15. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 6 ຂອບເຂດສິດຂອງອົງການ**

ອົງການ ຄຸ້ມຄອງ ແລະ ປົກປັກຮັກສາ ເຂດແຫຼ່ງນໍ້າ ນໍ້າເທີນ 2 ມີສິດ ດັ່ງນີ້:

1. ສະເໜີປັບປຸງ ກົງຈັກການຈັດຕັ້ງ ຂອງຕົນ ຕໍ່ລັດຖະບານ;

2. ຊີ້ນຳ ແລະ ຄຸ້ມຄອງ ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ສິດຕົກລົງບັນຫາ ໃນອົງການ ກ່ຽວກັບການຄຸ້ມຄອງ ຢ່າງລະອຽດ;

3. ຮຽກໂຮມ ພະນັກງານນຳພາ, ພະນັກງານຄຸ້ມຄອງ ແລະ ນັກວິຊາການ ຂອງອົງການ ເຂົ້າຮ່ວມປະຊຸມ ຫຼື ລາຍງານສ່ອງແສງວຽກງານ;

4. ຄົ້ນຄວ້າ ປະກອບຄຳເຫັນ, ຄຸ້ມຄອງ ແລະ ກວດກາ ທຸກໂຄງການ ທີ່ດຳເນີນກິດຈະການ ຢູ່ໃນເຂດແຫຼ່ງນໍ້າ ນໍ້າເທີນ 2;

5. ພົວພັນ, ເຊັນສັນຍາ, ອະນຸສັນຍາ, ຮ່ວມມື, ຍາດແຍ່ງການຊ່ວຍເຫຼືອ, ການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາ ໃນເຂດແຫຼ່ງນໍ້າ ນໍ້າເທີນ 2 ຕາມການມອບໝາຍ ຫຼື ການຕົກລົງຂອງລັດຖະບານ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;

6. ຄຸ້ມຄອງ ແລະ ກວດກາ ການນຳໃຊ້ງົບປະມານຂອງຕົນ ໃຫ້ໄປຕາມກົດໝາຍ ແລະ ລະບຽບການ;

7. ຕັ້ງຈຸດກວດກາ ໃນເຂດປ່າສະຫງວນແຫ່ງຊາດນາກາຍ ນໍ້າເທີນ ແລະ ແຫຼ່ງນໍ້າ ນໍ້າເທີນ 2 ຕາມກົດໝາຍ ແລະ ລະບຽບການ;

8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 7 ໂຄງປະກອບການຈັດຕັ້ງ**

ອົງການຄຸ້ມຄອງ ແລະ ປົກປັກຮັກສາ ເຂດແຫຼ່ງນໍ້າ ນໍ້າເທີນ 2 ປະກອບດ້ວຍ:

1. ສະພາບໍລິຫານ;

2. ກອງເລຂາ.

ມາດຕາ 8 ສະພາບໍລິຫານ

ສະພາບໍລິຫານ ແມ່ນການຈັດຕັ້ງສູງສຸດ ຂອງອົງການຄຸ້ມຄອງ ແລະ ປົກປັກຮັກສາ ເຂດແຫຼ່ງນ້ຳ ນ້ຳເທີນ 2 ຊຶ່ງປະກອບດ້ວຍ ປະທານ, ຮອງປະທານ ແລະ ຄະນະກຳມະການ ທີ່ເປັນຜູ້ຕາງໜ້າຈາກພາກລັດຂັ້ນສູນກາງ, ທ້ອງຖິ່ນ ແລະ ພາກສ່ວນເອກະຊົນ ດັ່ງນີ້:

1. ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນປະທານ;
2. ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນຮອງປະທານ, ທັງເປັນຜູ້ປະຈຳການ;
3. ຮອງເຈົ້າແຂວງ ແຂວງ ຄຳມ່ວນ ເປັນຮອງປະທານ;
4. ຮອງເຈົ້າແຂວງ ແຂວງ ບໍລິຄຳໄຊ ເປັນຮອງປະທານ;
5. ຫົວໜ້າ ກົມປ່າໄມ້, ກະຊວງກະສິກຳ ແລະປ່າໄມ້ ເປັນຄະນະ;
6. ຫົວໜ້າ ກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະບໍ່ແຮ່ ເປັນຄະນະ;
7. ຫົວໜ້າ ຫ້ອງການ ກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ເປັນຄະນະ;
8. ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງຄຳມ່ວນ ເປັນຄະນະ;
9. ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງບໍລິຄຳໄຊ ເປັນຄະນະ;
10. ເຈົ້າເມືອງ ເມືອງນາກາຍ, ແຂວງຄຳມ່ວນ ເປັນຄະນະ;
11. ເຈົ້າເມືອງ ເມືອງຄຳເກີດ, ແຂວງບໍລິຄຳໄຊ ເປັນຄະນະ;
12. ຫົວໜ້າ ພະແນກທະຫານຊາຍແດນ, ກອງບັນຊາການທະຫານແຂວງຄຳມ່ວນ ເປັນຄະນະ;
13. ຫົວໜ້າ ພະແນກທະຫານຊາຍແດນ, ກອງບັນຊາການທະຫານແຂວງ ບໍລິຄຳໄຊ ເປັນຄະນະ;
14. ຜູ້ຕາງໜ້າ ທີ່ຖືກແຕ່ງຕັ້ງຈາກອຳນວຍການໃຫຍ່ຂອງບໍລິສັດໄຟຟ້າ ນ້ຳເທີນ 2 ເປັນຄະນະ.

ມາດຕາ 9 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ

ສະພາບໍລິຫານ ຂອງ ອຄປ.ທ2 ມີ ສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຊຸກຍູ້ ການຈັດຕັ້ງປະຕິບັດ ໜ້າທີ່ ວຽກງານ ຕາມຈຸດປະສົງຂອງ ອຄປ.ທ2;
2. ກຳນົດ ນະໂຍບາຍ ແລະ ບົດແນະນຳ ໃນການບໍລິຫານ ວຽກງານຂອງ ອຄປ.ທ2;
3. ປະສານງານກັບ ຂະແໜງການທີ່ກ່ຽວຂ້ອງ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ;
4. ຕິດຕາມ ກວດກາ ການເຄື່ອນໄຫວວຽກງານຂອງ ກອງເລຂາ ຢ່າງເປັນປົກະຕິ;
5. ພິຈາລະນາ ແລະ ຮັບຮອງເອົາແຜນຄຸ້ມຄອງ, ແຜນດຳເນີນງານ ແລະ ແຜນງົບປະມານປະຈຳປີ;
6. ພິຈາລະນາ ແລະ ຮັບຮອງເອົາກົດລະບຽບ, ລະບົບການອອກໃບອະນຸຍາດໃຫ້ດຳເນີນວຽກງານໃນເຂດແຫຼ່ງນ້ຳ ນ້ຳເທີນ 2;
7. ກຳນົດ ນະໂຍບາຍ ໃນການລົງທຶນ ແລະ ແຕ່ງຕັ້ງຄະນະກຳມະການຄຸ້ມຄອງການລົງທຶນ ໃນເຂດແຫຼ່ງນ້ຳ ນ້ຳເທີນ 2;
8. ວ່າຈ້າງ ຄະນະກວດກາເອກະລາດ ແລະ ນັກກວດສອບບັນຊີເອກະລາດ ທີ່ມີມາດຖານສາກົນເພື່ອປະຕິ ບັດໜ້າທີ່ວຽກງານ ຕາມທີ່ໄດ້ກຳນົດໄວ້ ໃນດຳລັດສະບັບນີ້;
9. ແຕ່ງຕັ້ງ ຫົວໜ້າກອງ ແລະ ຮອງຫົວໜ້າກອງເລຂາ ຂອງ ອົງການ ອຄປ.ທ2;
10. ແຕ່ງຕັ້ງ ຫຼື ຈ້າງທີ່ປຶກສາ ເພື່ອດຳເນີນການສຶກສາ ຄົ້ນຄວ້າ ຫຼື ຈັດຕັ້ງປະຕິບັດ ວຽກງານໃດໜຶ່ງ;
11. ກຳນົດເງິນເດືອນ ແລະ ນະໂຍບາຍ ທີ່ເໝາະສົມໃຫ້ພະນັກງານ ທີ່ປຶກສາ ແລະ ຊ່ຽວຊານ ພາຍໃນອົງການຂອງຕົນ;
12. ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຂອງ ອຄປ.ທ2 ໃຫ້ແກ່ລັດຖະບານຢ່າງເປັນປົກກະຕິ;
13. ແຕ່ງຕັ້ງ ສະມາຊິກຂອງຕົນ ຜູ້ໃດຜູ້ໜຶ່ງ ເປັນຜູ້ປະຈຳການ ເພື່ອຊີ້ນຳການຈັດຕັ້ງປະຕິບັດວຽກງານ ຂອງ ກອງເລຂາ ຂອງຕົນ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ຂອງລັດຖະບານ.

## ມາດຕາ 10 ສິດ ແລະ ໜ້າທີ່ ຂອງປະທານສະພາບໍລິຫານ

ປະທານສະພາບໍລິຫານ ອຄປ.ທ2 ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ ແລະ ມະຕິຂອງລັດຖະບານ;
2. ຊີ້ນຳ, ຕິດຕາມ ກວດກາ ກ່ຽວກັບວຽກງານ ຄຸ້ມຄອງ ແລະ ປົກປັກຮັກສາ ເຂດປ່າສະຫງວນແຫ່ງຊາດນາກາຍ-ນ້ຳເທີນ ແລະ ເຂດແຫຼ່ງນ້ຳ ນ້ຳເທີນ 2;
3. ອຳນວຍຄວາມສະດວກ, ຄວບຄຸມ ເພື່ອຮັບປະກັນວ່າ ອົງການ ອຄປ.ທ2 ສາມາດດຳເນີນວຽກງານ ຂອງ ຕົນ ໃຫ້ມີຜົນສຳເລັດເປັນຢ່າງດີ;
4. ມອບສິດໃຫ້ຮອງປະທານສະພາບໍລິຫານ ເປັນປະທານກອງປະຊຸມ ໃນກໍລະນີທີ່ປະທານສະພາບໍລິຫານ ບໍ່ສາມາດເຂົ້າຮ່ວມໄດ້;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ ແລະ ສະພາບໍລິຫານ.

## ມາດຕາ 11 ຄ່າໃຊ້ຈ່າຍ ແລະ ການສັບປ່ຽນໜ້າທີ່ຂອງສະພາບໍລິຫານ

ປະທານ, ຮອງປະທານ ແລະ ຄະນະສະພາບໍລິຫານ ອຄປ.ທ2 ໄດ້ຮັບຄ່າໃຊ້ຈ່າຍໃນການປະຕິບັດວຽກງານ ທີ່ກ່ຽວກັບວຽກງານຂອງອົງການ.

ປະທານ, ຮອງປະທານ ຫຼື ຄະນະສະພາບໍລິຫານ ອຄປ.ທ2 ອາດມີການປ່ຽນແປງ, ສັບປ່ຽນ ຫຼື ປ່ຽນແທນ ໂດຍການແຕ່ງຕັ້ງຈາກພາກສ່ວນກ່ຽວຂ້ອງ ໃນກໍລະນີ ດັ່ງນີ້:

1. ບໍ່ມີໜ້າຢູ່ ສປປ ລາວ ຫຼື ບໍ່ມີໜ້າໃນໜ້າທີ່ຮັບຜິດຊອບເປັນການຊົ່ວຄາວ;
2. ບໍ່ສາມາດເຂົ້າຮ່ວມປະຊຸມສະພາບໍລິການ ໄດ້ຫຼາຍຄັ້ງຕິດຕໍ່ກັນ;
3. ບໍ່ສາມາດປະຕິບັດໜ້າທີ່ ປະທານ, ຮອງປະທານ ຫຼື ຄະນະສະພາບໍລິຫານ ອຄປ.ທ2 ໄດ້.

## ມາດຕາ 12 ກອງເລຂາ

ກອງເລຂາ ເປັນຫ້ອງການບໍລິຫານປະຈຳການຂອງ ອຄປ.ທ2, ປະກອບດ້ວຍ ຫົວໜ້າກອງເລຂາ, ຮອງຫົວໜ້າ, ພະນັກງານວິຊາການ, ພະນັກງານຊ່ວຍວຽກຈຳນວນໜຶ່ງ ຊຶ່ງຕັ້ງຢູ່ເມືອງນາກາຍ ແຂວງຄຳມ່ວນ.

ກອງເລຂາ ອຄປ.ທ2 ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງປະຕິບັດໜ້າທີ່ວຽກງານປະຈຳວັນ ໂດຍສອດຄ່ອງ ກັບນະໂຍບາຍລວມ ແລະ ຕາມການມອບໝາຍ ຂອງສະພາບໍລິຫານ;
2. ສ້າງ ແຜນການ ແລະ ງົບປະມານ ເປັນແຕ່ລະໄລຍະ ເພື່ອສະເໜີ ສະພາບໍລິຫານ ພິຈາລະນາ ແລະ ຮັບຮອງເອົາ;
3. ຄຸ້ມຄອງ, ຕິດຕາມກວດກາ ການປະຕິບັດແຜນການ ແລະ ງົບປະມານ ຢ່າງຕໍ່ເນື່ອງ ເພື່ອຮັບປະກັນໃຫ້ທຶນ ໄດ້ຖືກນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ແຜນການປະຈຳປີ;
4. ຮ່ວມມືກັບ ຄະນະກວດກາ, ຄະນະກວດສອບບັນຊີເອກະລາດ ເພື່ອປະຕິບັດໜ້າທີ່ວຽກງານ ຕາມທີ່ ໄດ້ກຳນົດໄວ້ ໃນດຳລັດສະບັບນີ້;
5. ປະສານສົມທົບ ແລະ ປຶກສາຫາລື ກັບພາກສ່ວນກ່ຽວຂ້ອງ ໃນການກະກຽມ, ຈັດຕັ້ງປະຕິບັດ ແລະ ປັບປຸງ ແຜນດຳເນີນງານ ໃຫ້ສະພາບໍລິຫານ ຮັບຮອງເອົາ;
6. ຈັດຊື້-ຈັດຈ້າງ, ອຳນວຍຄວາມສະດວກ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດກິດຈະກຳ ຂອງແຜນການປະຈຳປີ ແລະ ແຜນດຳເນີນງານຂອງ ອຄປ.ທ2 ທີ່ໄດ້ມອບໃຫ້ພາກສ່ວນກ່ຽວຂ້ອງປະຕິບັດ;
7. ເຊັນສັນຍາ ຕາມການອະນຸມັດ ຂອງສະພາບໍລິຫານ;

8. ຄຸ້ມຄອງ ແລະ ນໍາໃຊ້ ທຶນ ທີ່ໄດ້ຮັບ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ;

9. ຈັດຕັ້ງປະຕິບັດ ລະບຽບການຄຸ້ມຄອງ ເຂດແຫຼ່ງນ້ຳ ນ້ຳເທີນ 2 ທີ່ສະພາບໍລິຫານ ຮັບຮອງ ຢ່າງເຂັ້ມງວດ;

10. ຈັດຕັ້ງປະຕິບັດວຽກງານສົ່ງເສີມ ການຄົ້ນຄວ້າທາງດ້ານວິທະຍາສາດ, ການສຳຫຼວດ ແລະ ການເກັບກຳຂໍ້ມູນ ໃນເຂດແຫຼ່ງນ້ຳ ນ້ຳເທີນ 2 ລວມທັງ ການທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ;

11. ຊຸກຍູ້ສົ່ງເສີມ ການພັດທະນາ ຮູບແບບການດຳລົງຊີວິດ ຂອງປະຊາຊົນບັນດາເຜົ່າ ໃນເຂດແຫຼ່ງນ້ຳ ນ້ຳເທີນ 2 ໃຫ້ເປັນແບບຍືນຍົງ ແລະ ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ;

12. ເປັນເລຂາກອງປະຊຸມ, ສ້າງບົດລາຍງານ ເປັນແຕ່ລະໄລຍະ ແລະ ກະກຽມ ກອງປະຊຸມປະຈຳປີ ຂອງສະພາບໍລິຫານ.

## ໝວດທີ 4
## ກອງປະຊຸມ ສະພາບໍລິຫານ

### ມາດຕາ 13 ກອງປະຊຸມສະພາບໍລິຫານ

ກອງປະຊຸມສະພາບໍລິຫານ ອຄປ.ທ2 ປະກອບດ້ວຍ:

1. ກອງປະຊຸມສາມັນ;
2. ກອງປະຊຸມວິສາມັນ.

ທຸກກອງປະຊຸມ ຕ້ອງມີຄະນະສະພາບໍລິຫານ ອຄປ.ທ2 ເຂົ້າຮ່ວມ ຈຳນວນ ສອງສ່ວນສາມ ຂຶ້ນໄປ ຈຶ່ງຖືວ່າ ຄົບອົງປະຊຸມ, ກໍລະນີບໍ່ຄົບອົງປະຊຸມ ແມ່ນບໍ່ສາມາດຜ່ານວຽກງານໃດໜຶ່ງໄດ້ ແລະ ຕ້ອງເລື່ອນໄປໃສ່ມື້ຕໍ່ໄປ.

### ມາດຕາ 14 ກອງປະຊຸມສາມັນ

ກອງປະຊຸມສາມັນຂອງສະພາບໍລິຫານ ອຄປ.ທ2 ຈັດຂຶ້ນ ສອງເທື່ອຕໍ່ປີ ໂດຍແມ່ນປະທານສະພາບໍລິຫານ ເປັນຜູ້ຮຽກປະຊຸມ ໂດຍການແຈ້ງເຊີນຂອງກອງເລຂາ ໃຫ້ຮັບຊາບລ່ວງໜ້າຢ່າງເປັນທາງການ ຢ່າງໜ້ອຍ ເຈັດວັນລັດຖະການ. ບັນຫາທີ່ຕ້ອງນຳເຂົ້າພິຈາລະນາໃນກອງປະຊຸມ ປະກອບດ້ວຍ:

1. ບົດລາຍງານກ່ຽວກັບການເຄື່ອນໄຫວຂອງ ອຄປ.ທ2 ລວມທັງບົດລາຍງານຂອງອົງການກວດກາ ແລະກວດສອບບັນຊີເອກະລາດ;
2. ການລາຍງານກ່ຽວກັບບົດສະຫຼຸບດ້ານການເງິນທີ່ໄດ້ຜ່ານການກວດສອບບັນຊີແລ້ວ;
3. ຄົ້ນຄວ້າ ແລະ ຮັບຮອງເອົາບັນຫາອື່ນ ທີ່ໄດ້ກຳນົດໄວ້ໃນລາຍການຂອງກອງປະຊຸມ.

### ມາດຕາ 15 ກອງປະຊຸມວິສາມັນ

ໃນກໍລະນີ ຈຳເປັນ ແລະ ຮີບດ່ວນ ປະທານ, ຮອງປະທານ ຫຼື ຄະນະສະພາບໍລິຫານ ອຄປ.ທ2 ຈຳນວນ ໜຶ່ງສ່ວນສາມຂຶ້ນໄປ ມີສິດສະເໜີ ຈັດກອງປະຊຸມວິສາມັນຂອງສະພາບໍລິຫານ ອຄປ.ທ2 ຈັດຂຶ້ນ ໂດຍແມ່ນ ປະທານສະພາບໍລິຫານ ເປັນຜູ້ຮຽກປະຊຸມ ພ້ອມທັງກຳນົດຫົວຂໍ້ ຫຼື ລາຍການຂອງກອງປະຊຸມ.

### ມາດຕາ 16 ມະຕິ ຂອງກອງປະຊຸມສະພາບໍລິຫານ

ມະຕິຂອງກອງປະຊຸມສະພາບໍລິຫານ ແມ່ນນິຕິກຳປະເພດໜຶ່ງທີ່ມີຜົນບັງຄັບທົ່ວໄປໃນເຂດແຫຼ່ງນ້ຳ ນ້ຳເທີນ 2 ຊຶ່ງໄດ້ສັງລວມບັນຫາສຳຄັນຕ່າງໆ ທີ່ກອງປະຊຸມໄດ້ຕົກລົງຮັບຮອງເອົາ. ມະຕິຂອງກອງປະຊຸມ

ສະພາບໍລິຫານ ຈະມີຜົນສັກສິດ ກໍຕໍ່ເມື່ອໄດ້ຮັບການເຫັນດີດ້ວຍການລົງຄະແນນສຽງ ຫຼາຍກວ່າສອງສ່ວນສາມ ຂອງຄະນະບໍລິຫານສະພາ ທີ່ເຂົ້າຮ່ວມປະຊຸມຢ່າງເປີດເຜີຍ .

**ມາດຕາ 17 ບົດບັນທຶກກອງປະຊຸມສະພາບໍລິຫານ**

ກອງປະຊຸມສະພາບໍລິຫານແຕ່ລະຄັ້ງ ຕ້ອງໄດ້ເຮັດບົດບັນທຶກ ໂດຍມີລາຍເຊັນຢັ້ງຢືນຈາກຫົວໜ້າກອງເລຂາ ແລະ ປະທານກອງປະຊຸມ.

ຫົວໜ້າກອງເລຂາ ຕ້ອງສົ່ງບົດບັນທຶກຂອງກອງປະຊຸມສະພາບໍລິຫານ ໃຫ້ປະທານ, ຮອງປະທານ ແລະ ກຳມະການສະພາບໍລິຫານ ພາຍໃນ ເຈັດວັນ ຫຼັງຈາກກອງປະຊຸມ.

## ໝວດທີ 5
## ການປະສານງານ ກັບຂະແໜງການກ່ຽວຂ້ອງ

**ມາດຕາ 18 ການປະສານງານກັບຂະແໜງການ ທີ່ກ່ຽວຂ້ອງ**

ອຄປ.ທ2 ປະສານງານກັບຂະແໜງການທີ່ກ່ຽວຂ້ອງ ດ້ວຍການສະເໜີ ຈຸດປະສົງ, ຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການຂອງເຂດແຫຼ່ງນໍ້າ ນໍ້າເທີນ 2 ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ ເພື່ອຍົກສູງຄວາມສາມາດ, ຄວາມເຂົ້າໃຈ ຂອງຂະແໜງການທີ່ກ່ຽວຂ້ອງ ຕໍ່ບັນດາວຽກງານຂອງ ອຄປ.ທ2 ໂດຍການສະໜັບສະໜູນ ແລະ ຊ່ວຍເຫຼືອ ໃນການຈັດຕັ້ງປະຕິບັດ ແຜນງານ, ແຜນການ ແລະ ໂຄງການ ຂອງເຂົາເຈົ້າບົນ ພື້ນຖານສອດຄ່ອງກັບເນື້ອໃນຈິດໃຈ ແລະ ຈຸດປະສົງ ຂອງດຳລັດສະບັບນີ້.

**ມາດຕາ 19 ການແບ່ງ ຄວາມຮັບຜິດຊອບ**

ອຄປ.ທ2 ມີຄວາມຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເຂດແຫຼ່ງນໍ້າ ນໍ້າເທີນ 2 ໂດຍມີການຮ່ວມມື ກັບພາກສ່ວນກ່ຽວຂ້ອງ ສະໜອງທຶນ ແລະ ຕິດຕາມກວດກາ ປະເມີນຜົນການຈັດຕັ້ງປະຕິບັດທຸກວຽກງານ ທີ່ປະຕິບັດຢູ່ໃນເຂດແຫຼ່ງນໍ້າ ນໍ້າເທີນ2. ໃນກໍລະນີ ກັກຕົວຜູ້ຕ້ອງຫາ ທີ່ລະເມີດຕໍ່ກົດໝາຍວ່າດ້ວຍປ່າໄມ້, ວ່າດ້ວຍສັດນໍ້າ-ສັດປ່າ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຕ້ອງສົ່ງມອບໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອດຳເນີນຄະດີຕາມກົດໝາຍ.

ຫ້ອງການກ່ຽວຂ້ອງ ຂອງເມືອງ ແລະ ແຂວງ ຮັບຜິດຊອບໂດຍກົງ ວຽກງານປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ດ້ວຍການວາງແຜນຮ່ວມກັບ ອຄປ.ທ2 ແລະ ຈັດຕັ້ງປະຕິບັດທຸກວຽກງານ ຢູ່ໃນເຂດ ແຫຼ່ງນໍ້ານໍ້າເທີນ 2 ໃຫ້ສອດຄ່ອງກັບ ນະໂຍບາຍຂອງ ອຄປ.ທ2 ດ້ວຍການສ້າງສັນຍາຮ່ວມກັນ.

## ໝວດທີ 6
## ທຶນ ຂອງອົງການ

**ມາດຕາ 20 ແຫຼ່ງທຶນ**

ທຶນຂອງ ອຄປ.ທ2 ໄດ້ມາຈາກແຫຼ່ງທຶນຕົ້ນຕໍ ດັ່ງນີ້:

1. ທຶນປະກອບສ່ວນ ຂອງ ບໍລິສັດໄຟຟ້ານໍ້າເທີນ 2 ຕາມການຕົກລົງກັນໃນສັນຍາສາປະທານ;
2. ທຶນຊ່ວຍເຫຼືອ ຈາກແຫຼ່ງທຶນ ຂອງລັດຖະບານ ຫຼື ແຫຼ່ງທຶນສາກົນ;
3. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 21 ການຄຸ້ມຄອງ ແລະ ນໍາໃຊ້ທຶນ**

ທຶນຂອງອົງການ ຕ້ອງໄດ້ຮັບການຄຸ້ມຄອງ ແລະ ນໍາໃຊ້ທຶນ ບົນພື້ນຖານຫຼັກການ ດັ່ງນີ້:

1. ການນໍາໃຊ້ທຶນ ຕ້ອງຮັບປະກັນ ຄວາມໂປ່ງໃສ, ມີປະສິດທິພາບ ແລະ ມີຄວາມຮັບຜິດຊອບ;
2. ນໍາໃຊ້ສະເພາະ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ທີ່ຖືກຈັດຕັ້ງປະຕິບັດ ຢູ່ໃນເຂດແຫຼ່ງນໍ້າ ນໍ້າເທີນ 2 ແລະ ບັນດາບ້ານ ໃນເຂດອ້ອມຮອບເທົ່ານັ້ນ;
3. ບັນດາແຜນງານ, ແຜນການ ແລະ ໂຄງການ ຂອງຂະແໜງການທີ່ກ່ຽວຂ້ອງ ທີ່ຈັດຕັ້ງປະຕິບັດຢູ່ ເຂດແຫຼ່ງນໍ້າ ນໍ້າເທີນ 2 ທີ່ໄດ້ຮັບການຊ່ວຍເຫຼືອທາງດ້ານວິຊາການ ອຄປ.ທ2 ຕ້ອງມີຄວາມສອດຄ່ອງ ຫຼື ຕາມຄວາມສາມາດສະໜັບສະໜູນ ຂອງອົງການ ໃນການຈັດຕັ້ງໂດຍກົງ ຂອງແຜນຄຸ້ມຄອງ ແລະ ແຜນດໍາເນີນງານຂອງອົງການ ອຄປ.ທ2;
4. ການຈັດຕັ້ງປະຕິບັດ ແຜນແມ່ບົດ ແລະ ແຜນດໍາເນີນງານດ້ານສິ່ງແວດລ້ອມ ແລະ ສັງຄົມ, ລວມທັງບັນດາ ແຜນງານ, ແຜນການ ແລະ ໂຄງການທີ່ໄດ້ຮັບການສະໜັບສະໜູນຈາກອົງການ ອຄປ.ທ2 ຕ້ອງໄດ້ຮັບ ການທົບທວນ ແລະ ກວດກາ ໂດຍຄະນະກວດກາເອກະລາດ.

**ມາດຕາ 22 ເງື່ອນໄຂການໄດ້ຮັບທຶນ**

ບັນດາແຜນງານ, ແຜນການ ແລະໂຄງການທີ່ສະເໜີຂໍທຶນຈາກ ອຄປ.ທ2 ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ແຜນງານ, ແຜນການ ແລະ ໂຄງການ ຕ້ອງໄດ້ຮັບການຢັ້ງຢືນຈາກຄະນະກວດກາເອກະລາດ ຂອງອົງການ ແລະ ໄດ້ຮັບຄໍາແນະນໍາຈາກຄະນະຊ່ຽວຊານສາກົນ ຕາມສັນຍາສໍາປະທານ;
2. ແຜນການ ປະຈໍາປີ ຕ້ອງຖືກຮັບຮອງໂດຍ ສະພາບໍລິຫານຂອງ ອຄປ.ທ2;
3. ການຈັດຕັ້ງປະຕິບັດ ແຜນການປະຈໍາປີ ທີ່ໄດ້ຮັບການສະໜອງທຶນຈາກ ອຄປ.ທ2 ຕ້ອງໄດ້ຮັບ ການກວດສອບ ຈາກຜູ້ກວດສອບ ຫຼື ບໍລິສັດກວດສອບເອກະລາດ.

## ໝວດທີ 7
## ການກວດກາ ແລະ ການກວດສອບບັນຊີ ເອກະລາດ

**ມາດຕາ 23 ການກວດກາເອກະລາດ**

ສະພາບໍລິຫານ ອຄປ.ທ2 ຕ້ອງແຕ່ງຕັ້ງ ແລະວ່າຈ້າງຄະນະກວດກາເອກະລາດ ທີ່ໄດ້ມາດຕະຖານສາກົນ ເພື່ອດໍາເນີນການຕິດຕາມ ກວດກາການຈັດຕັ້ງປະຕິບັດວຽກງານໃນແຕ່ລະປີ ແລະ ຕີລາຄາການປະຕິບັດໜ້າທີ່ວຽກງານຂອງ ອຄປ.ທ2 ແລ້ວລາຍງານໃຫ້ສະພາບໍລິຫານຊາບ ກ່ຽວກັບຄວາມຄືບໜ້າ ການຈັດຕັ້ງປະຕິບັດໜ້າທີ່ວຽກງານ. ບົດລາຍງານດັ່ງກ່າວ ຕ້ອງສົ່ງໃຫ້ອົງການປົກຄອງທ້ອງຖິ່ນ, ຂັ້ນສູນກາງ ແລະ ພາກສ່ວນກ່ຽວຂ້ອງຮັບຊາບ.

ສະພາບໍລິຫານ ອຄປ.ທ2, ກອງເລຂາ ແລະ ພາກສ່ວນທີ່ຈັດຕັ້ງປະຕິບັດວຽກງານຂອງ ອຄປ.ທ2 ຕ້ອງໃຫ້ການຮ່ວມມື ແລະ ອໍານວຍຄວາມສະດວກ ໃຫ້ແກ່ອົງການກວດກາເອກະລາດ ເຂົ້າເຖິງຂໍ້ມູນ, ເອກະສານ, ໄດ້ເຫັນການເຄື່ອນໄຫວວຽກງານ ແລະ ເຂົ້າໄປເຖິງສະຖານທີ່ ທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການກວດກາ ແລະ ຕີລາຄາການຈັດຕັ້ງປະຕິບັດວຽກງານຂອງ ອຄປ.ທ2 ແລະ ວຽກງານທີ່ ອຄປ.ທ2 ເປັນຜູ້ປະສານງານນັ້ນ ເປັນໄປຢ່າງມີປະສິດທິຜົນ.

**ມາດຕາ 24 ການກວດສອບບັນຊີແບບເອກະລາດ**

ສະພາບໍລິຫານ ອຄປ.ທ2 ຕ້ອງແຕ່ງຕັ້ງ ແລະວ່າຈ້າງ ບໍລິສັດກວດສອບບັນຊີເອກະລາດ ທີ່ໄດ້ມາດຕະຖານສາກົນ ໃຫ້ເຂົ້າມາດໍາເນີນການກວດສອບບັນຊີປະຈໍາປີ ຂອງກອງທຶນ ຢ່າງມີຄວາມເປັນເອກະລາດ,

ພ້ອມທັງກວດສອບການດຳເນີນວຽກງານ ດ້ານການເງິນ, ການບັນຊີ ແລະ ການບັນທຶກເກັບກຳຂໍ້ມູນຕ່າງໆ ຂອງ ອຄປ.ທ2 ໂດຍການນຳໃຊ້ຫຼັກການກວດສອບບັນຊີ ທີ່ໄດ້ມາດຕະຖານສາກົນ.

**ມາດຕາ 25 ຄະນະຊ່ຽວຊານສາກົນ ດ້ານສິ່ງແວດລ້ອມ ແລະ ສັງຄົມ**

ຄະນະຊ່ຽວຊານສາກົນດ້ານສິ່ງແວດລ້ອມ ແລະ ສັງຄົມ ມີໜ້າທີ່ຕາມສັນຍາສຳປະທານ ໃນການໃຫ້ຄຳເຫັນ ແລະ ຄຳແນະນຳແບບເອກະລາດ ກ່ຽວກັບໄພຂົ່ມຂູ່ຕໍ່ກັບສິ່ງແວດລ້ອມ ແລະ ສັງຄົມ ທີ່ພົວພັນກັບໂຄງການ ລວມທັງການຈັດຕັ້ງປະຕິບັດຂອງ ອຄປ.ທ2.

ຄະນະຊ່ຽວຊານສາກົນ ນຳສະເໜີຜົນການຕິດຕາມຂອງຕົນ ໃຫ້ແກ່ລັດຖະບານ, ບໍລິສັດໄຟຟ້ານ້ຳເທີນ 2 ແລະ ສະຖາບັນການເງິນສາກົນ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 26 ຕາປະທັບ, ເຄື່ອງໝາຍ ແລະ ເຄື່ອງແບບ**

ອຄປ.ທ2 ມີຕາປະທັບ, ເຄື່ອງໝາຍ ແລະ ເຄື່ອງແບບ ເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ໂດຍແມ່ນສະພາບໍລິຫານ ອຄປ.ທ2 ເປັນຜູ້ວາງອອກ.

**ມາດຕາ 27 ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການລັດຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ລົງລາຍເຊັນ ເປັນຕົ້ນໄປ ແລະ ໃຊ້ປ່ຽນແທນດຳລັດ ສະບັບເລກທີ 471/ນຍ, ລົງວັນທີ 11 ພະຈິກ 2010 ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ເຂດແຫຼ່ງນ້ຳ ນ້ຳເທີນ 2.

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ